**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ /ລບ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ)

# ດຳລັດ

# ວ່າດ້ວຍ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ການປ້ອງກັນຊາດ ສະບັບເລກທີ 67/ສພຊ, ລົງວັນທີ 11 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍ ພັນທະປ້ອງກັນຊາດ ສະບັບເລກທີ 25/ສພຊ, ລົງວັນທີ 13 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງກະຊວງປ້ອງກັນປະເທດ ສະບັບເລກທີ , ລົງວັນທີ

## ລັດຖະບານ ອອກດຳລັດ:

## ພາກທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ, ຕິດຕາມ ກວດກາ ວຽກງານກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ເພື່ອໃຫ້ມີຄວາມໜັກແໜ້ນທາງດ້ານ ການເມືອງ ແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີລະບຽບວິໄນເຂັ້ມງວດ, ມີແບບແຜນທັນສະໄໝ ແນ່ໃສ່ສຳເລັດ ໜ້າທີ່ໃນການເຄື່ອນໄຫວວຽກງານປ້ອງກັນຊາດ–ປ້ອງກັນຄວາມສະຫງົບ ບ້ານ, ສຳນັກງານອົງການ, ລັດວິສາຫະກິດ,ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ ໃຫ້ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### ມາດຕາ 2 ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ

ກຳລັງກອງຫຼອນ ແມ່ນ ກຳລັງເຄິ່ງປະກອບອາວຸດປ້ອງກັນຊາດ ເຮັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມ ສະຫງົບ ໃນການປົກປັກຮັກສາ ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ ຂອບເຂດບ້ານ.

ກຳລັງປ້ອງກັນຕົວ ແມ່ນ ພະນັກງານ-ລັດຖະກອນ ເຮັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນການປົກປັກຮັກສາ ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ ຢູ່ ກະຊວງ, ອົງການລັດທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ ແລະ ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. ອາວຸດຍຸດໂທປະກອນ ໝາຍເຖິງ ປືນ ແລະ ລູກກະສູນ, ວັດຖຸຕິດຫ້ອຍຂອງປືນ, ອຸປະກອນເຄື່ອງມືຮັບປະກັນເຕັກນິກ, ອາໄຫຼ່ປ່ຽນຖ່າຍ, ວັດຖຸບໍລະບັດເຕັກນິກ ແລະ ເຄື່ອງມືສ້າງສະໜາມ;

2. ສາລະເວ ໝາຍເຖິງ ການເຄື່ອນໄຫວເກັບກຳຂໍ້ມູນ, ກວດກາສະພາບ;

3. ໝວດເອກະລາດ ຂອງກຳລັງປ້ອງກັນຕົວ ໝາຍເຖິງ ໝວດທີ່ບໍ່ຂຶ້ນກັບກອງຮ້ອຍ ແຕ່ຂຶ້ນກັບກອງພັນ ຫຼື ກະຊວງ, ອົງການລັດທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ ແລະ ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ;

4. ກຳລັງພົນສຳຮອງປ້ອງກັນຊາດ ໝາຍເຖິງ ກຳລັງບໍ່ປະຈຳການໃນກອງທັບປະຊາຊົນລາວ ໃນຍາມສັນຕິພາບ ແຕ່ຢູ່ໃນແຜນການຈັດຕັ້ງປະກອບ ຂອງກອງທັບປະຊາຊົນລາວ ໃນພາວະສົງຄາມ ຫຼື ສຸກເສີນ;

5. ຄຸ້ມຄອງທາງດ້ານຄຸນນະພາບ ຂອງກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ໝາຍເຖິງ ການຄຸ້ມຄອງດ້ານຄຸນທາດການເມືອງ, ຄວາມສາມາດ ແລະ ການປະຕິບັດໜ້າທີ່ຂອງກຳລັງ.

**ມາດຕາ 4 ນະໂຍບາຍຂອງລັດຕໍ່ວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ**

ລັດ ໃຫ້ຄວາມສຳຄັນໃນການສ້າງ ແລະ ພັດທະນາກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ໃຫ້ເຕີບໃຫຍ່, ເຂັ້ມແຂງ ຮອບດ້ານ, ມີຄວາມໜັກແໜ້ນທາງດ້ານ ການເມືອງແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ຄວາມຮູ້, ຄວາມສາມາດ ປະກອບສ່ວນເຂົ້າໃນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢ່າງຕັ້ງໜ້າ.

ລັດ ສົ່ງເສີມວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ດ້ວຍການສະໜອງງົບປະມານທີ່ຈຳເປັນ ໃຫ້ອົງການຄຸ້ມຄອງວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ເພື່ອສ້າງເງື່ອນໄຂໃຫ້ອົງການຈັດຕັ້ງດັ່ງກ່າວ ໄດ້ເຄື່ອນໄຫວວຽກງານຢ່າງມີປະສິດພາບ ແລະ ປະສິດທິຜົນ.

ລັດ ຊຸກຍູ້ ໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທຸກພາກສ່ວນໃນທົ່ວສັງຄົມ ປະກອບສ່ວນທາງດ້ານວັດຖຸປັດໄຈ ເຂົ້າໃນວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ**

ການເຄື່ອນໄຫວວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງນະໂຍບາຍຂອງພັກ, ກົດໝາຍ, ແຜນຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

2. ນຳພາ, ຊີ້ນຳ ແລະ ກວດກາ ໂດຍປະທານຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຕ່ລະຂັ້ນ;

3. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ບົນພື້ນຖານແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ປະສານສົມທົບຢ່າງກົມກຽວ ລະຫວ່າງສູນກາງ ແລະ ທ້ອງຖິ່ນ;

4. ຮັບປະກັນຄວາມລັບທາງດ້ານການທະຫານ.

**ມາດຕາ 6 ພັນທະ ຕໍ່ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະຕໍ່ວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ໃນການປົກປັກຮັກສາຄວາມສະຫງົບທາງດ້ານ ການເມືອງ, ເສດຖະກິດ ແລະ ສັງຄົມ ດ້ວຍການ ຕ້ານ, ສະກັດກັ້ນ, ແຈ້ງ, ລາຍງານ, ສະໜອງຂໍ້ມູນຂ່າວສານ ແລະ ປະກອບສ່ວນທາງດ້ານ ພາຫະນະ, ວັດຖຸປະກອນ ແລະ ປັດໄຈ ເຂົ້າໃນວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ເພື່ອສ້າງເງື່ອນໄຂໃຫ້ກຳລັງດັ່ງກ່າວ ໄດ້ເຄື່ອນໄຫວຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 7 ການປົກປ້ອງ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ**

ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ໄດ້ຮັບການປົກປ້ອງຕາມກົດໝາຍຈາກການກ່າວຫາ, ຮ້ອງຟ້ອງ, ໃສ່ຮ້າຍປ້າຍສີ, ຂົ່ມຂູ່ ຫຼື ນາບຂູ່ ໃນເວລາເຄື່ອນໄຫວປະຕິບັດໜ້າທີ່ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 8 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນ ແລະ ເຄື່ອນໄຫວ ກ່ຽວກັບວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ໃນຂອບເຂດທົ່ວປະເທດ.

**ມາດຕາ 9 ການຮ່ວມມືສາກົນ**

ລັດ ສົ່ງເສີມ ພົວພັນຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ແລະ ສາກົນ ກ່ຽວກັບວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ດ້ວຍການ ແລກປ່ຽນ ບົດຮຽນ, ຂໍ້ມູນຂ່າວສານ, ບຳລຸງຍົກລະດັບຄວາມຮູ້ດ້ານວິຊາສະເພາະ ບໍ່ແຊກແຊງກິດຈະການພາຍໃນ ຊຶ່ງກັນ ແລະ ກັນ, ສະເໝີພາບ ຕ່າງຝ່າຍຕ່າງມີຜົນປະໂຫຍດ.

## ພາກທີ II
## ກຳລັງກອງຫຼອນ
## ໝວດທີ 1
## ການອະນຸມັດ ແລະ ການສິ້ນສຸດ ການເປັນກຳລັງກອງຫຼອນ

**ມາດຕາ 10 ການອະນຸມັດເຂົ້າ ຫຼື ປົດອອກຈາກ ກຳລັງກອງຫຼອນ**

ກອງບັນຊາການທະຫານ ເມືອງ, ນະຄອນ ເປັນຜູ້ອະນຸມັດການເຂົ້າເປັນ ກຳລັງກອງຫຼອນ ຕາມການສະເໜີ ຂອງຄະນະກຳມະການປົກຄອງຕາແສງ ໂດຍຜ່ານການຄັດເລືອກ ຂອງບ້ານ.

ກອງບັນຊາການທະຫານ ເມືອງ, ນະຄອນ ເປັນຜູ້ປົດອອກຈາກ ກຳລັງກອງຫຼອນ ຕາມການສະເໜີ ຂອງຄະນະກຳມະການປົກຄອງຕາແສງ ຕາມການລາຍງານ ຂອງບ້ານ.

**ມາດຕາ 11 ເງື່ອນໄຂ ແລະ ມາດຕະຖານ ກໍາລັງກອງຫຼອນ**

ກໍາລັງກອງຫຼອນ ຕ້ອງ ມີ ເງື່ອນໄຂ ແລະ ມາດຕະຖານ ດັ່ງນີ້:

1. ເປັນພົນລະເມືອງລາວ, ຖືສັນຊາດລາວໂດຍກໍາເນີດ ມີອາຍຸແຕ່ 18 ຫາ 60 ປີ, ທີ່ບໍ່ເປັນພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ ແລະ ກໍາລັງພົນສໍາຮອງປ້ອງກັນຊາດ;
2. ມີນໍ້າໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ຮັກລະບອບປະຊາທິປະໄຕປະຊາຊົນ, ຈໍາແນກໄດ້ມິດ-ສັດຕູຢ່າງຈະແຈ້ງ, ມີຄວາມຈົງຮັກພັກດີຕໍ່ ປະເທດຊາດ ແລະ ປະຊາຊົນ;
3. ມີ ສຸຂະພາບແຂງແຮງດີ ແລະ ຊີວະປະຫວັດຈະແຈ້ງ.

**ມາດຕາ 12 ການປະກອບ ກໍາລັງກອງຫຼອນ ແລະ ອາວຸດຍຸດໂທປະກອນ**

ການປະກອບ ກໍາລັງກອງຫຼອນ ແລະ ອາວຸດຍຸດໂທປະກອນ ໃນຍາມສັນຕິພາບ ແລະ ໃນຍາມສົງຄາມ ມີ ດັ່ງນີ້:

ການປະກອບ ກໍາລັງກອງຫຼອນ ໃນຍາມສັນຕິພາບ ໃຫ້ໄດ້ 03% ຂອງພົນລະເມືອງ.

ການປະກອບ ກໍາລັງກອງຫຼອນ ໃນຍາມສົງຄາມ ໃຫ້ໄດ້ 10% ຂອງພົນລະເມືອງ.

ສໍາລັບ ການປະກອບອາວຸດຍຸດໂທປະກອນ ກໍາລັງກອງຫຼອນ ໃນຍາມສັນຕິພາບ ແລະ ໃນຍາມສົງຄາມ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 13 ການສິ້ນສຸດ ການເປັນກໍາລັງກອງຫຼອນ**

ສາເຫດຂອງການສິ້ນສຸດການເປັນ ກໍາລັງກອງຫຼອນ ມີ ດັ່ງນີ້:

1. ມີອາຍຸເກີນ 60 ປີ;
2. ສຸຂະພາບອ່ອນເພຍ;
3. ເສຍອົງຄະ ຫຼື ເສຍຊີວິດ;
4. ການປະລະໜ້າທີ່ເກີນ 03 ເດືອນ;
5. ຖືກສານຕັດສິນລົງໂທດຕັດອິດສະຫຼະພາບ ຍ້ອນການກະທໍາຜິດໂດຍເຈດຕະນາ.

ພາຍຫຼັງການສິ້ນສຸດການເປັນກໍາລັງກອງຫຼອນ ຜູ້ກ່ຽວຕ້ອງສົ່ງອາວຸດຍຸດໂທປະກອນ ຄືນໃຫ້ບ້ານທີ່ຕົນຂຶ້ນກັບ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ກໍາລັງກອງຫຼອນ

**ມາດຕາ 14 ທີ່ຕັ້ງ ແລະ ພາລະບົດບາດ ກໍາລັງກອງຫຼອນ**

ກໍາລັງກອງຫຼອນ ມີ ທີ່ຕັ້ງ ຢູ່ບ້ານ ໃນຂອບເຂດທົ່ວປະເທດ ແລະ ມີ ພາລະບົດບາດເປັນເສນາທິການໃຫ້ແກ່ຄະນະກໍາມະການປົກຄອງຕາແສງ ແລະ ກອງບັນຊາການທະຫານເມືອງ ໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຮັກສາຄວາມປອດໄພ ຂອງສັງຄົມໃນຂອບເຂດບ້ານ, ຕາແສງ ຕາມຂອບເຂດຄວາມຮັບຜິດຊອບ ຂອງຕົນ.

**ມາດຕາ 15 ສິດ ແລະ ໜ້າທີ່ ກຳລັງກອງຫຼອນ**

ກຳລັງກອງຫຼອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ປົກປັກຮັກສາ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ;
3. ປຸກລະດົມຂົນຂວາຍປະຊາຊົນ ເຊື່ອມຊຶມ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ກົດໝາຍຂອງລັດ, ກົດລະບຽບຂອງບ້ານ ແລະ ປະກອບສ່ວນເຂົ້າໃນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ຕິດຕາມ ກຳແໜ້ນສະພາບການ, ກົນອຸບາຍ, ເລ່ຫຼ່ຽມ ການເຄື່ອນໄຫວຂອງບຸກຄົນ ຫຼື ກຸ່ມຄົນບໍ່ດີ, ຍົກສູງສະຕິລະວັງຕົວ, ກຽມພ້ອມສູ້ຮົບ, ສູ້ຮົບ, ຕ້ານ ແລະ ສະກັດກັ້ນ ປະກົດການຫຍໍ້ທໍ້;
5. ເຄື່ອນໄຫວກວດກາ ສາລະເວ, ເວນຍາມ, ຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ;
6. ຝຶກຝົນຫຼໍ່ຫຼອມຕົນເອງ, ຮໍ່າຮຽນການເມືອງ-ການທະຫານ ແລະ ກົດໝາຍ;
7. ໄດ້ຮັບການປະກອບອາວຸດຍຸດໂທປະກອນ ແລະ ອຸປະກອນທີ່ຈຳເປັນ ເພື່ອຮັບໃຊ້ເຂົ້າໃນການເຮັດໜ້າທີ່;
8. ໄດ້ຮັບນະໂຍບາຍອຸດໜູນ ແລະ ນະໂຍບາຍຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບການອື່ນ;
9. ປະສານສົມທົບກັບ ກຳລັງປ້ອງກັນຄວາມສະຫງົບບ້ານ, ກຳລັງຫຼວງ, ກຳລັງທ້ອງຖິ່ນ, ທະຫານຊາຍແດນ ແລະ ກຳລັງປ້ອງກັນຕົວ ກ່ຽວກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
10. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ຕໍ່ຂັ້ນເທິງທີ່ຕົນສັງກັດຢູ່ ຢ່າງເປັນປົກກະຕິ;
11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ຫົວໜ່ວຍການຈັດຕັ້ງ ກຳລັງກອງຫຼອນ

**ມາດຕາ 16 ການອະນຸມັດສ້າງຕັ້ງ ຫົວໜ່ວຍການຈັດຕັ້ງ ກຳລັງກອງຫຼອນ**

ກົມໃຫຍ່ເສນາທິການກອງທັບ ເປັນຜູ້ອະນຸມັດສ້າງຕັ້ງ ຫົວໜ່ວຍການຈັດຕັ້ງ ກຳລັງກອງຫຼອນ ຂັ້ນກອງຮ້ອຍ, ໝວດເອກະລາດ ຕາມການສະເໜີຂອງ ກົມການທະຫານທ້ອງຖິ່ນ ກົມໃຫຍ່ເສນາທິການກອງທັບ ພາຍຫຼັງໄດ້ຮັບຄຳສະເໜີຂອງ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ.

ກົມການທະຫານທ້ອງຖິ່ນ ກົມໃຫຍ່ເສນາທິການກອງທັບ ສົມທົບກັບ ກອງບັນຊາການທະຫານນະຄອນຫຼວງ, ແຂວງ ຈັດຕັ້ງປະກາດສ້າງຕັ້ງ ຫົວໜ່ວຍການຈັດຕັ້ງ ກຳລັງກອງຫຼອນ ຂັ້ນກອງຮ້ອຍ, ໝວດເອກະລາດ ຕາມການອະນຸມັດ ຂອງກົມໃຫຍ່ເສນາທິການກອງທັບ.

**ມາດຕາ 17 ເງື່ອນໄຂການສ້າງຕັ້ງ ຫຼື ຍຸບເລີກ ຫົວໜ່ວຍການຈັດຕັ້ງ ກຳລັງກອງຫຼອນ**

ຫົວໜ່ວຍການຈັດຕັ້ງ ກຳລັງກອງຫຼອນ ຈະຖືກສ້າງຕັ້ງ ຫຼື ຍຸບເລີກ ໃນເງື່ອນໄຂ ດັ່ງນີ້:

1. ມີການປ່ຽນແປງກົງຈັກການຈັດຕັ້ງ ບ້ານ, ຕາແສງ;
2. ຕາມແຜນຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃນແຕ່ລະໄລຍະ ຂອງລັດຖະບານ.

**ມາດຕາ 18 ໂຄງປະກອບ ການຈັດຕັ້ງກຳລັງກອງຫຼອນ**

ໂຄງປະກອບການຈັດຕັ້ງ ກຳລັງກອງຫຼອນ ກຳນົດ ມີ ຂັ້ນກອງຮ້ອຍ ແລະ ຂັ້ນໝວດເອກະລາດ ຕາມຈຸດພິເສດຂອງ ບ້ານ, ຕາແສງ.

ໂຄງປະກອບການຈັດຕັ້ງ ກຳລັງກອງຫຼອນ ຂັ້ນກອງຮ້ອຍ ປະກອບດ້ວຍ 03 ໝວດ ຂຶ້ນກັບ.

ໂຄງປະກອບການຈັດຕັ້ງ ກຳລັງກອງຫຼອນ ຂັ້ນໝວດເອກະລາດ ປະກອບດ້ວຍ 04 ໝູ່ ຂຶ້ນກັບ.

ສຳລັບ ຈຳນວນພົນ ກຳລັງກອງຫຼອນ ແຕ່ລະຂັ້ນ ແມ່ນ ໄດ້ກຳນົດໄວ້ລະບຽບການຕ່າງຫາກ.

**ມາດຕາ 19 ສິດ ແລະ ໜ້າທີ່ ຜູ້ບັນຊາ ກອງຮ້ອຍ, ໝວດ, ໝູ່**

ຜູ້ບັນຊາ ກອງຮ້ອຍ, ໝວດ, ໝູ່ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ-ຊີ້ນຳ ກອງຮ້ອຍ, ໝວດ, ໝູ່ ຂອງຕົນ ໃນການປະຕິບັດວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ກຳແໜ້ນສະພາບຈຳນວນພົນ, ຄຸນນະພາບ ແລະ ຄວາມສາມາດ ຂອງກຳລັງກອງຫຼອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
3. ຕິດຕາມ, ກວດກາ, ຄຸ້ມຄອງ ແລະ ບັນຊາກົມກອງ ໃນການເຄື່ອນໄຫວວຽກງານ ກຳລັງກອງຫຼອນ;
4. ປະຕິບັດວຽກງານການດຳເນີນຊີວິດການເມືອງ ແລະ ລະບອບສ່ອງແສງລາຍງານໃຫ້ຂັ້ນເທິງຖັດຕົນ ຢ່າງເປັນປົກກະຕິ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 20 ລະບົບສາຍໄຍການບັນຊາ ຫົວໜ່ວຍການຈັດຕັ້ງ ກຳລັງກອງຫຼອນ**

ລະບົບສາຍໄຍການບັນຊາ ຫົວໜ່ວຍການຈັດຕັ້ງ ກຳລັງກອງຫຼອນ ມີ ດັ່ງນີ້:

1. ກະຊວງປ້ອງກັນປະເທດ ໂດຍແມ່ນ ກົມໃຫຍ່ເສນາທິການກອງທັບ ເປັນອີງການ ຊີ້ນຳ, ບັນຊາ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ກ່ຽວກັບວຽກງານ ກຳລັງກອງຫຼອນ ໃນຂອບເຂດທົ່ວປະເທດ;
2. ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ເປັນອີງການ ຊີ້ນຳ, ບັນຊາ ກອງບັນຊາການທະຫານ ເມືອງ, ນະຄອນ ທີ່ຂຶ້ນກັບຕົນ ກ່ຽວກັບວຽກງານ ກຳລັງກອງຫຼອນ;
3. ກອງບັນຊາການທະຫານເມືອງ, ນະຄອນ ເປັນຜູ້ຊີ້ນຳ ກອງຮ້ອຍ ກຳລັງກອງຫຼອນ.
4. ຜູ້ບັນຊາ ແລະ ຄະນະ ກອງຮ້ອຍ, ໝວດ, ໝູ່ ເປັນຜູ້ບັນຊາ ຊີ້ນຳໂດຍກົງ ກຳລັງກອງຫຼອນ ທີ່ຂຶ້ນກັບຕົນ.

**ມາດຕາ 21 ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ບັນຊາ ຫົວໜ່ວຍການຈັດຕັ້ງ ກຳລັງກອງຫຼອນ**

ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຄະນະບັນຊາ ກອງຮ້ອຍ, ໝວດເອກະລາດ ຕາມການສະເໜີຂອງ ກອງບັນຊາການທະຫານ ເມືອງ, ນະຄອນ.

ກອງບັນຊາການທະຫານ ເມືອງ, ນະຄອນ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ໝວດ, ຮອງຫົວໜ້າໝວດ, ຫົວໜ້າໝູ່, ຮອງຫົວໜ້າໝູ່ ແລະ ກຳລັງກອງຫຼອນ ທີ່ຂຶ້ນກັບກອງຮ້ອຍ ກອງຫຼອນ ຕາມການສະເໜີຂອງ ຄະນະກຳມະການປົກຄອງຕາແສງ ຕາມການຄົ້ນຄວ້າຂອງບ້ານ.

ໃນກໍລະນີ ກຳລັງກອງຫຼອນ ຍົກຍ້າຍຖິ່ນຖານໄປຢູ່ບ້ານອື່ນ ໃຫ້ກອງບັນຊາການທະຫານເມືອງ ອອກໃບນຳສົ່ງໃຫ້ຜູ້ກ່ຽວໄປສັງກັດຢູ່ການຈັດຕັ້ງໃໝ່ ຕາມເງື່ອນໄຂຕົວຈິງ.

# ໝວດທີ 4
# ການເຄື່ອນໄຫວວຽກງານ ກໍາລັງກອງຫຼອນ

**ມາດຕາ 22 ການເຄື່ອນໄຫວວຽກງານ ກໍາລັງກອງຫຼອນ**

ການເຄື່ອນໄຫວວຽກງານ ກໍາລັງກອງຫຼອນ ປະກອບມີ:

1. ການຄຸ້ມຄອງກໍາລັງກອງຫຼອນ ແລະ ອາວຸດຍຸດໂທປະກອນ;
2. ການອົບຮົມ-ຫັດແອບ;
3. ການກວດກາຄວາມພ້ອມ ກໍາລັງກອງຫຼອນ;
4. ການກຽມພ້ອມສູ້ຮົບ;
5. ການເຄື່ອນໄຫວສູ້ຮົບ.

**ມາດຕາ 23 ການຄຸ້ມຄອງກໍາລັງກອງຫຼອນ ແລະ ອາວຸດຍຸດໂທປະກອນ**

ການຄຸ້ມຄອງກໍາລັງກອງຫຼອນ ມີ ດັ່ງນີ້:

1. ຄຸ້ມຄອງທາງດ້ານບັນຊີຈໍານວນພົນ;
2. ຄຸ້ມຄອງທາງດ້ານຄຸນນະພາບ.

ການຄຸ້ມຄອງອາວຸດຍຸດໂທປະກອນ ທີ່ປະກອບໃຫ້ກໍາລັງກອງຫຼອນ ມີ ດັ່ງນີ້:

1. ການຂຶ້ນທະບຽນ;
2. ການປົກປັກຮັກສາ, ການບໍາລະບັດ ແລະ ສ້ອມແປງ;
3. ການຕິດຕາມກວດກາການນໍາໃຊ້.

**ມາດຕາ 24 ການອົບຮົມ - ຫັດແອບ**

ການອົບຮົມ - ຫັດແອບ ກໍາລັງກອງຫຼອນ ມີ ດັ່ງນີ້:

1. ກະຊວງປ້ອງກັນປະເທດ ເປັນຜູ້ກໍານົດໂຄງການຫຼັກສູດ ແລະ ຊີ້ນໍາການອົບຮົມ-ຫັດແອບ ໃຫ້ຜູ້ບັນຊາ ກອງຮ້ອຍກອງຫຼອນ ໃນຂອບເຂດທົ່ວປະເທດ;

2. ການອົບຮົມ-ຫັດແອບ ໃຫ້ຜູ້ບັນຊາ ກອງຮ້ອຍກອງຫຼອນ ກອງບັນຊາການທະຫານ ນະຄອນຫຼວງ , ແຂວງ ເປັນຜູ້ສ້າງແຜນການ, ປະທານຄະນະກໍາມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ນະຄອນຫຼວງ, ແຂວງ ເປັນຜູ້ອະນຸມັດແຜນການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ການອົບຮົມ-ຫັດແອບ ໃຫ້ກໍາລັງກອງຫຼອນ ກອງບັນຊາການທະຫານ ເມືອງ, ນະຄອນ ເປັນຜູ້ສ້າງແຜນການ ປະທານຄະນະກໍາມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເມືອງ, ນະຄອນ ເປັນຜູ້ອະນຸມັດແຜນການ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

ສໍາລັບ ກໍານົດເວລາ ການອົບຮົມ - ຫັດແອບ ກໍາລັງກອງຫຼອນ ແມ່ນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 25 ການກວດກາຄວາມພ້ອມ ກໍາລັງກອງຫຼອນ**

ກະຊວງປ້ອງກັນປະເທດ ເປັນຜູ້ຊີ້ນໍາການກວດກາຄວາມພ້ອມ ຂອງກໍາລັງກອງຫຼອນ ໃນຂອບເຂດທົ່ວປະເທດ.

ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ, ເມືອງ ແລະ ນະຄອນ ເປັນຜູ້ກວດກາຄວາມພ້ອມຂອງກໍາລັງກອງຫຼອນ ຢູ່ຂັ້ນຂອງຕົນ.

ການກວດກາຄວາມພ້ອມ ຂອງກຳລັງກອງຫຼອນ ມີ ດັ່ງນີ້:

1. ຈຳນວນພົນ ແລະ ຄຸນນະພາບ;
2. ຄວາມສາມາດໃນການເຄື່ອນຍ້າຍ ແລະ ການມອບ-ຮັບ ພາຫະນະເຕັກນິກ;
3. ຄວາມສາມາດໃນການຊີ້ນຳ-ບັນຊາ ຂອງຜູ້ບັນຊາ;
4. ຄວາມພ້ອມ ວຽກງານຮັບປະກັນພະລາທິການ-ເຕັກນິກ ແລະ ອາວຸດຍຸດໂທປະກອນ.

**ມາດຕາ 26 ການກຽມພ້ອມສູ້ຮົບ**

ການກຽມພ້ອມສູ້ຮົບ ໃນຍາມສັນຕິພາບ ມີ ດັ່ງນີ້:

1. ປັບປຸງກໍ່ສ້າງກຳລັງ;
2. ສ້າງແຜນການກຽມພ້ອມສູ້ຮົບ;
3. ກຽມພ້ອມປະຕິບັດຄຳສັ່ງ, ເຮັດໜ້າທີ່ປ້ອງກັນເວນຍາມ ແລະ ສາລະເວຕິດຕາມສະພາບ ໃນຂອບເຂດຄວາມຮັບຜິດຊອບ;

ການກຽມພ້ອມສູ້ຮົບ ໃນຍາມສົງຄາມ ມີ ດັ່ງນີ້:

1. ກຳແໜ້ນສະພາບ;
2. ຈັດຕັ້ງກຳລັງ;
3. ປັບປຸງຄືນແຜນການສູ້ຮົບ;
4. ປຸກລະດົມກຳລັງເພີ່ມ ແລະ ປະກອບອາວຸດຍຸດໂທປະກອນ;
5. ປະຕິບັດຄຳສັ່ງ ແລະ ເຮັດໜ້າທີ່ເຄື່ອນໄຫວສູ້ຮົບ;

**ມາດຕາ 27 ການເຄື່ອນໄຫວສູ້ຮົບ**

ການເຄື່ອນໄຫວສູ້ຮົບ ຂອງກຳລັງກອງຫຼອນ ມີ ດັ່ງນີ້:

1. ເຮັດໜ້າທີ່ປ້ອງກັນເວນຍາມ ແລະ ສາລະເວ ຕິດຕາມສະພາບ;
2. ເປັນກຳລັງຊ່ວຍໜູນ ໃຫ້ກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ;
3. ສົມທົບກັບກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ ເຮັດໜ້າທີ່ສູ້ຮົບ ຕາມຄຳສັ່ງຂອງຂັ້ນເທິງ.

## ພາກທີ III
## ກຳລັງປ້ອງກັນຕົວ
### ໝວດທີ 1
### ການອະນຸມັດ ແລະ ການສິ້ນສຸດ ການເປັນກຳລັງປ້ອງກັນຕົວ

**ມາດຕາ 28 ການອະນຸມັດເຂົ້າ ຫຼື ປົດອອກຈາກ ກຳລັງປ້ອງກັນຕົວ**

ຫົວໜ່ວຍການຈັດຕັ້ງຂອງ ກະຊວງ, ອົງການລັດທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ ເປັນຜູ້ອະນຸມັດການເຂົ້າເປັນ ຫຼື ປົດອອກຈາກ ກຳລັງປ້ອງກັນຕົວ.

**ມາດຕາ 29 ເງື່ອນໄຂ ແລະ ມາດຕະຖານ ກຳລັງປ້ອງກັນຕົວ**

ກຳລັງປ້ອງກັນຕົວ ຕ້ອງມີເງື່ອນໄຂ ແລະ ມາດຕະຖານ ດັ່ງນີ້:

1. ເປັນພະນັກງານ-ລັດຖະກອນ ຢູ່ ກະຊວງ, ອົງການລັດທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ;

2. ມີ ນ້ຳໃຈຮັກຊາດ, ທັດສະນະຫຼັກໝັ້ນ ແລະ ຈຳແນກໄດ້ມິດ-ສັດຕູຢ່າງຈະແຈ້ງ;
3. ສຸຂະພາບແຂງແຮງດີ, ມີຄວາມຫ້າວຫັນຕໍ່ໜ້າທີ່ວຽກງານ ແລະ ຊີວະປະຫວັດຈະແຈ້ງ.

**ມາດຕາ 30 ການປະກອບ ກຳລັງປ້ອງກັນຕົວ ແລະ ອາວຸດຍຸດໂທປະກອນ**

ການປະກອບ ກຳລັງປ້ອງກັນຕົວ ໃນຍາມສັນຕິພາບ ແລະ ໃນຍາມສົງຄາມ ແມ່ນ ປະກອບຕາມໂຄງປະກອບການຈັດຕັ້ງ.

ສຳລັບ ການປະກອບອາວຸດຍຸດໂທປະກອນ ກຳລັງປ້ອງກັນຕົວ ໃນຍາມສັນຕິພາບ ແລະ ໃນຍາມສົງຄາມ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 31 ການສິ້ນສຸດ ການເປັນກຳລັງປ້ອງກັນຕົວ**

ການສິ້ນສຸດການເປັນ ກຳລັງປ້ອງກັນຕົວ ມີ ດັ່ງນີ້:

1. ພັກຜ່ອນຮັບອຸດໜູນບຳນານ;
2. ສຸຂະພາບອ່ອນເພຍ;
3. ເສຍອົງຄະ, ເສຍຊີວິດ;
4. ອອກຈາກລັດຖະກອນ;
5. ຖືກລົງໂທດຕັດອິດສະຫຼະພາບ ຍ້ອນການກະທຳຜິດໂດຍເຈດຕະນາ.

ພາຍຫຼັງການສິ້ນສຸດການເປັນກຳລັງປ້ອງກັນຕົວ ຕ້ອງສົ່ງອາວຸດຍຸດໂທປະກອນ ຄືນໃຫ້ອົງການຈັດຕັ້ງທີ່ຕົນຂຶ້ນກັບ.

## ໝວດທີ 2
## ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ກຳລັງປ້ອງກັນຕົວ

**ມາດຕາ 32 ທີ່ຕັ້ງ ແລະ ພາລະບົດບາດ ກຳລັງປ້ອງກັນຕົວ**

ກຳລັງປ້ອງກັນຕົວ ຕັ້ງຢູ່ ກະຊວງ, ອົງການລັດທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ ໃນຂອບເຂດທົ່ວປະເທດ, ມີ ພາລະບົດບາດໃນການເຮັດໜ້າທີ່ ປ້ອງກັນຊາດ , ປ້ອງກັນຄວາມສະຫງົບ, ຮັກສາຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 33 ສິດ ແລະ ໜ້າທີ່ ກຳລັງປ້ອງກັນຕົວ**

ໃນການເຄື່ອນໄຫວວຽກງານ ກຳລັງປ້ອງກັນຕົວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ;
3. ຕິດຕາມ ກຳແໜ້ນສະພາບການ, ກົນອຸບາຍ, ເລ່ຫຼ່ຽມ ການເຄື່ອນໄຫວຂອງບຸກຄົນ ຫຼື ກຸ່ມຄົນບໍ່ດີ, ຍົກສູງສະຕິລະວັງຕົວ, ກຽມພ້ອມສູ້ຮົບ, ສູ້ຮົບ, ຕ້ານ ແລະ ສະກັດກັ້ນ ປະກົດການຫຍໍ້ທໍ້;
4. ເຄື່ອນໄຫວກວດກາສາລະເວ, ເວນຍາມ, ຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ;
5. ອົບຮົມ-ຫັດແອບ ການເມືອງ-ການທະຫານ;

6. ໄດ້ຮັບການປະກອບອາວຸດຍຸດໂທປະກອນ ແລະ ອຸປະກອນທີ່ຈຳເປັນ ເພື່ອຮັບໃຊ້ເຂົ້າໃນການເຮັດໜ້າທີ່;

7. ໄດ້ຮັບນະໂຍບາຍອຸດໜູນ ແລະ ນະໂຍບາຍຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລະ ລະບຽບການອື່ນ;

8. ປະສານສົມທົບກັບ ກຳລັງກອງຫຼອນ, ກຳລັງປ້ອງກັນຄວາມສະຫງົບບ້ານ, ກຳລັງທ້ອງຖິ່ນ, ກຳລັງຫຼວງ ແລະ ທະຫານຊາຍແດນ ກ່ຽວກັບວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານ ຕໍ່ຂັ້ນເທິງທີ່ຕົນສັງກັດຢູ່ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ

### ມາດຕາ 34 ການອະນຸມັດສ້າງຕັ້ງ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ

ການອະນຸມັດສ້າງຕັ້ງ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ ມີ ດັ່ງນີ້:

1. ລັດຖະມົນຕີກະຊວງປ້ອງກັນປະເທດ ເປັນຜູ້ອະນຸມັດສ້າງຕັ້ງ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ ຂັ້ນກອງພັນ ຕາມການສະເໜີຂອງ ກົມໃຫຍ່ເສນາທິການກອງທັບ;

2. ປະທານຄະນະກຳມະການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ນະຄອນຫຼວງ, ແຂວງ ເປັນຜູ້ອະນຸມັດສ້າງຕັ້ງ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ ຂັ້ນກອງຮ້ອຍ ແລະ ໝວດເອກະລາດ ຕາມການສະເໜີຂອງກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ພາຍຫຼັງໄດ້ຮັບການເຫັນດີ ຂອງກົມໃຫຍ່ເສນາທິການກອງທັບ.

ສຳລັບຂັ້ນຕອນ ແລະ ວິທີການ ຂໍອະນຸມັດສ້າງຕັ້ງ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ ແມ່ນໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 35 ເງື່ອນໄຂການສ້າງຕັ້ງ ຫຼື ຍຸບເລີກ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ

ການສ້າງຕັ້ງ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ ມີ ເງື່ອນໄຂ ດັ່ງນີ້:

1. ມີການສ້າງຕັ້ງກິດຈະການຂຶ້ນໃໝ່;
2. ມີການຂະຫຍາຍຕົວທາງດ້ານກິດຈະການຂອງລັດ.

ການຍຸບເລີກ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ ມີ ເງື່ອນໄຂ ດັ່ງນີ້:

1. ມີການຍຸບເລີກກິດຈະການ ຂອງລັດວິສາຫະກິດ, ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ;
2. ມີການໂອນກິດຈະການ ຂອງລັດວິສາຫະກິດ, ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ ໃຫ້ນິຕິບຸກຄົນອື່ນ.

### ມາດຕາ 36 ໂຄງປະກອບ ການຈັດຕັ້ງກຳລັງປ້ອງກັນຕົວ

ໂຄງປະກອບການຈັດຕັ້ງ ກຳລັງປ້ອງກັນຕົວ ກຳນົດ ມີ ຂັ້ນ ກອງພັນ, ກອງຮ້ອຍ ແລະ ໝວດເອກະລາດ ຕາມຈຸດພິເສດຂອງ ກະຊວງ, ອົງການລັດທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ.

ໂຄງປະກອບ ການຈັດຕັ້ງ ກຳລັງປ້ອງກັນຕົວ ຂັ້ນກອງພັນ ປະກອບດ້ວຍ 03 ກອງຮ້ອຍຂຶ້ນກັບ.

ໂຄງປະກອບ ການຈັດຕັ້ງ ກຳລັງປ້ອງກັນຕົວ ຂັ້ນກອງຮ້ອຍ ປະກອບດ້ວຍ 03 ໝວດຂຶ້ນກັບ.

ໂຄງປະກອບການຈັດຕັ້ງ ກຳລັງປ້ອງກັນຕົວ ຂັ້ນໝວດເອກະລາດ ປະກອບດ້ວຍ 04 ໝູ່ຂຶ້ນກັບ.

ສຳລັບ ຈຳນວນພົນ ກຳລັງປ້ອງກັນຕົວ ແຕ່ລະຂັ້ນ ແມ່ນ ໄດ້ກຳນົດໄວ້ລະບຽບການຕ່າງຫາກ.

**ມາດຕາ 37 ສິດ ແລະ ໜ້າທີ່ ຜູ້ບັນຊາ ກອງພັນ, ກອງຮ້ອຍ, ໝວດເອກະລາດ**

ຜູ້ບັນຊາ ກອງພັນ, ກອງຮ້ອຍ, ໝວດເອກະລາດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນຳພາ-ຊີ້ນຳ ກອງພັນ, ກອງຮ້ອຍ, ໝວດເອກະລາດ ຂອງຕົນ ໃນການປະຕິບັດວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ກຳແໜ້ນສະພາບຈຳນວນພົນ, ຄຸນນະພາບ ແລະ ຄວາມສາມາດ ຂອງກຳລັງປ້ອງກັນຕົວ ທີ່ຢູ່ໃນ ຄວາມຮັບຜິດຊອບຂອງຕົນ;
3. ຄຸ້ມຄອງ, ບັນຊາກົມກອງໃນເວລາເຕົ້າໂຮມ ອົບຮົມ-ຫັດແອບ ແລະ ກວດກາຄວາມພ້ອມຂອງ ກຳລັງ;
4. ປະຕິບັດລະບອບລ່ອງແສງລາຍງານໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ;
5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 38 ລະບົບສາຍໄຍການບັນຊາ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ**

ລະບົບສາຍໄຍການບັນຊາ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ ມີ ດັ່ງນີ້:

1. ກະຊວງປ້ອງກັນປະເທດ ໂດຍແມ່ນ ກົມໃຫຍ່ເສນາທິການກອງທັບ ເປັນອົງການ ຊີ້ນຳ, ບັນຊາ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ກ່ຽວກັບວຽກງານ ກຳລັງປ້ອງກັນຕົວ ໃນຂອບເຂດທົ່ວ ປະເທດ;
2. ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ເປັນອົງການ ຊີ້ນຳ, ບັນຊາ ກຳລັງປ້ອງກັນຕົວ ໃນ ຄວາມຮັບຜິດຊອບຂອງຕົນ;
3. ກະຊວງ, ອົງການລັດທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ ເປັນຜູ້ຊີ້ນຳບັນຊາໂດຍກົງ ຕໍ່ກຳລັງປ້ອງກັນຕົວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 39 ການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ບັນຊາ ຫົວໜ່ວຍການຈັດຕັ້ງ ກຳລັງປ້ອງກັນຕົວ**

ກົມໃຫຍ່ເສນາທິການກອງທັບ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຄະນະບັນຊາ ກອງພັນ ຕາມການ ສະເໜີຂອງ ສຳນັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ ທີ່ກ່ຽວຂ້ອງ ພາຍຫຼັງໄດ້ຮັບການເຫັນດີ ຈາກກອງບັນຊາການທະຫານ ນະຄອນຫຼວງ, ແຂວງ.

ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຄະນະບັນຊາ ກອງຮ້ອຍ, ໝວດເອກະລາດ ຕາມການສະເໜີຂອງ ສຳນັກງານອົງການ, ລັດວິສາຫະກິດ, ໂຮງ ຈັກ, ໂຮງງານ ທີ່ກ່ຽວຂ້ອງ.

## ໝວດທີ 4
## ການເຄື່ອນໄຫວວຽກງານ ກໍາລັງປ້ອງກັນຕົວ

**ມາດຕາ 40 ການເຄື່ອນໄຫວວຽກງານ ກໍາລັງປ້ອງກັນຕົວ**

ການເຄື່ອນໄຫວວຽກງານ ກໍາລັງປ້ອງກັນຕົວ ປະກອບມີ:

1. ການຄຸ້ມຄອງກໍາລັງປ້ອງກັນຕົວ ແລະ ການປະກອບອາວຸດຍຸດໂທປະກອນ;
2. ການອົບຮົມ-ຫັດແອບ;
3. ການກວດກາຄວາມພ້ອມ ກໍາລັງປ້ອງກັນຕົວ;
4. ການກຽມພ້ອມສູ້ຮົບ;
5. ການເຄື່ອນໄຫວສູ້ຮົບ.

**ມາດຕາ 41 ການຄຸ້ມຄອງກໍາລັງປ້ອງກັນຕົວ ແລະ ອາວຸດຍຸດໂທປະກອນ**

ການຄຸ້ມຄອງກໍາລັງປ້ອງກັນຕົວ ມີ ດັ່ງນີ້:

1. ຄຸ້ມຄອງທາງດ້ານບັນຊີຈໍານວນພົນ;
2. ຄຸ້ມຄອງທາງດ້ານຄຸນນະພາບ.

ການຄຸ້ມຄອງອາວຸດຍຸດໂທປະກອນ ທີ່ປະກອບໃຫ້ກໍາລັງປ້ອງກັນຕົວ ມີ ດັ່ງນີ້:

1. ການຂຶ້ນທະບຽນ ອາວຸດຍຸດໂທປະກອນ;
2. ການປົກປັກຮັກສາ, ການບົວລະບັດ ແລະ ສ້ອມແປງ;
3. ການຕິດຕາມກວດກາການນໍາໃຊ້.

**ມາດຕາ 42 ການອົບຮົມ - ຫັດແອບ**

ການຈັດຕັ້ງອົບຮົມ - ຫັດແອບ ກໍາລັງປ້ອງກັນຕົວ ໃຫ້ດໍາເນີນປີລະຄັ້ງ ຫຼັກສູດການອົບຮົມ-ຫັດແອບ ແມ່ນ ກະຊວງປ້ອງກັນປະເທດ ເປັນຜູ້ກໍານົດ.

1. ການອົບຮົມ-ຫັດແອບ ໃຫ້ຜູ້ບັນຊາ ກອງພັນ, ກອງຮ້ອຍ ແລະ ໝວດເອກະລາດ ກໍາລັງປ້ອງກັນຕົວ ແມ່ນ ໃຫ້ເຂົ້າຮ່ວມອົບຮົມ-ຫັດແອບ ນໍາຜູ້ບັນຊາ ກອງຮ້ອຍກອງຫຼອນ;

2. ການອົບຮົມ-ຫັດແອບ ໃຫ້ກໍາລັງປ້ອງກັນຕົວ ຢູ່ຂັ້ນສູນກາງ, ກະຊວງປ້ອງກັນປະເທດ ເປັນຜູ້ອະນຸມັດແຜນການ ຕາມການສະເໜີ ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ທີ່ກ່ຽວຂ້ອງ;

3. ການອົບຮົມ-ຫັດແອບ ໃຫ້ກໍາລັງປ້ອງກັນຕົວ ຢູ່ຂັ້ນທ້ອງຖິ່ນ, ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ເປັນຜູ້ອະນຸມັດແຜນການ ຕາມການສະເໜີ ຂອງສໍານັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ ທີ່ກ່ຽວຂ້ອງ.

ສໍາລັບ ກໍານົດເວລາ ການອົບຮົມ - ຫັດແອບ ກໍາລັງປ້ອງກັນຕົວ ແມ່ນ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 43 ການກວດກາຄວາມພ້ອມ ກໍາລັງປ້ອງກັນຕົວ**

ກະຊວງປ້ອງກັນປະເທດ ເປັນຜູ້ຊີ້ນໍາການກວດກາຄວາມພ້ອມກໍາລັງປ້ອງກັນຕົວ ໃນຂອບເຂດທົ່ວປະເທດ.

ກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ເປັນຜູ້ກວດກາຄວາມພ້ອມກໍາລັງປ້ອງກັນຕົວ ຢູ່ຂັ້ນຂອງຕົນ.

ການກວດກາຄວາມພ້ອມກຳລັງປ້ອງກັນຕົວ ມີ ດັ່ງນີ້:

1. ດ້ານ ຈຳນວນພົນ ແລະ ຄຸນນະພາບ;
2. ຄວາມສາມາດໃນການຊີ້ນຳ-ບັນຊາ ຂອງຜູ້ບັນຊາ;
3. ວຽກງານຮັບປະກັນພະລາທິການ-ເຕັກນິກ ແລະ ອາວຸດຍຸດໂທປະກອນ.

**ມາດຕາ 44 ການກຽມພ້ອມສູ້ຮົບ**

ການກຽມພ້ອມສູ້ຮົບ ໃນຍາມສັນຕິພາບ ມີ ດັ່ງນີ້:

1. ປັບປຸງກໍ່ສ້າງກຳລັງ;
2. ສ້າງແຜນການ ປ້ອງກັນທີ່ຕັ້ງ;
3. ກຽມພ້ອມປະຕິບັດຄຳສັ່ງ, ເຮັດໜ້າທີ່ປ້ອງກັນເວນຍາມ ແລະ ສາລະເວ ຕິດຕາມສະພາບ ໃນຂອບເຂດຄວາມຮັບຜິດຊອບ.

ການກຽມພ້ອມສູ້ຮົບ ໃນຍາມສົງຄາມ ມີ ດັ່ງນີ້:

1. ກຳແໜ້ນສະພາບ;
2. ຈັດຕັ້ງກຳລັງ;
3. ປັບປຸງຄືນແຜນການສູ້ຮົບ ປ້ອງກັນທີ່ຕັ້ງ;
4. ປຸກລະດົມກຳລັງເພີ່ມ ແລະ ປະກອບອາວຸດຍຸດໂທປະກອນ;
5. ປະຕິບັດຄຳສັ່ງ, ເຮັດໜ້າທີ່ປ້ອງກັນທີ່ຕັ້ງ ແລະ ເຄື່ອນໄຫວສູ້ຮົບ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 45 ການເຄື່ອນໄຫວສູ້ຮົບ**

ການເຄື່ອນໄຫວສູ້ຮົບ ໃນຍາມສັນຕິພາບ ແລະ ໃນຍາມສົງຄາມ ມີ ດັ່ງນີ້:

1. ເຮັດໜ້າທີ່ປ້ອງກັນເວນຍາມ, ກວດກາສາລະເວ ແລະ ຕິດຕາມສະພາບ ໃນຂອບເຂດຄວາມຮັບຜິດຊອບ;
2. ສົມທົບກັບກຳລັງຫຼວງ ແລະ ກຳລັງທ້ອງຖິ່ນ ເຮັດໜ້າທີ່ສູ້ຮົບ ຕາມຄຳສັ່ງຂອງຂັ້ນເທິງ;

## ພາກທີ IV
## ຂໍ້ຫ້າມ

**ມາດຕາ 46 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງ, ນາບຄູ່, ໃຊ້ຄວາມຮຸນແຮງ, ບໍ່ໃຫ້ການຮ່ວມມື ຕໍ່ການປະຕິບັດໜ້າທີ່ຂອງກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ;
2. ໃສ່ຮ້າຍປ້າຍສີ, ໝິ່ນປະໝາດ, ແບ່ງແຍກ, ມ້າງເພຄວາມສາມັກຄີ ຕໍ່ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ;
3. ສວຍໃຊ້, ແອບອ້າງ ແລະ ປອມແປງ ການເປັນ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ;
4. ເປັນສື່ກາງ ໃນການ ໃຫ້ ຫຼື ຮັບ ສິນບົນ ແກ່ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ;

5. ຊື້, ຂາຍ ຫຼື ນຳໃຊ້ເຄື່ອງແບບ ຂອງກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ໂດຍບໍ່ໄດ້ຮັບອະນຸຍາດ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 47 ຂໍ້ຫ້າມສຳລັບ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ**

ຫ້າມ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ສິດ, ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຫາຜົນປະໂຫຍດແກ່ ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;

2. ເມີນເສີຍ, ເລີນເລີ້ ຕໍ່ການປະຕິບັດໜ້າທີ່, ບິດເບືອນຂໍ້ມູນ, ກົດໜ່ວງຖ່ວງດຶງ ເອກະສານ ກ່ຽວກັບວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

3. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງ;

4. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ທາງລັດຖະການ ແລະ ການທະຫານ;

5. ທວງເອົາ, ຂໍເອົາ ຫຼື ຮັບເອົາ ສິນບົນ;

6. ສ້າງຄວາມເສຍຫາຍຕໍ່ ຊັບສິນຂອງບຸກຄົນ ແລະ ຊັບສິນຂອງລັດ;

7. ຊື້ ຂາຍ, ແລກປ່ຽນ, ຊຸກເຊື່ອງ, ນຳໃຊ້, ທຳລາຍ ອາວຸດຍຸດໂທປະກອນ ໂດຍບໍ່ໄດ້ຮັບອະນຸຍາດ;

8. ນຳໃຊ້ອາວຸດຍຸດໂທປະກອນ ເຂົ້າໃນການລ່າ ສັດປ່າ, ສັດນ້ຳ ແລະ ເປົ້າໝາຍອື່ນທີ່ບໍ່ຖືກຕ້ອງ;

9. ປະດິດ, ດັດແປງສະພາບເຕັກນິກ, ຮູບຮ່າງ, ສີສັນ ແລະ ໂຄງປະກອບອາວຸດຍຸດໂທປະກອນ ໂດຍບໍ່ໄດ້ຮັບອະນຸຍາດ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ V
## ການຄຸ້ມຄອງ ແລະ ກວດກາ ວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ

### ໝວດທີ 1
### ການຄຸ້ມຄອງ ວຽກງານກຳລັງກອງຫຼອນ

**ມາດຕາ 48 ອົງການ ຄຸ້ມຄອງ ວຽກງານກຳລັງກອງຫຼອນ**

ອົງການ ຄຸ້ມຄອງກຳລັງກອງຫຼອນ ມີ ດັ່ງນີ້:

1. ກະຊວງປ້ອງກັນປະເທດ;
2. ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ;
3. ກອງບັນຊາການທະຫານ ເມືອງ, ນະຄອນ;
4. ຄະນະກຳມະການປົກຄອງ ຕາແສງ.

**ມາດຕາ 49 ສິດ ແລະ ໜ້າທີ່ ກະຊວງປ້ອງກັນປະເທດ**

ໃນການຄຸ້ມຄອງ ວຽກງານກຳລັງກອງຫຼອນ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານກຳລັງກອງຫຼອນ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານກຳລັງກອງຫຼອນ ໃຫ້ເປັນ ແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານກຳລັງກອງຫຼອນ ໃນຂອບເຂດທົ່ວປະເທດ;

4. ຊີ້ນຳ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ ແລະ ໂຄງການ ກ່ຽວກັບວຽກງານກຳລັງກອງຫຼອນ;

5.ອອກ, ໂຈະ ແລະ ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ເອກະສານ ທາງການທະຫານ ເພື່ອຄຸ້ມຄອງ ມະຫາພາກ ກ່ຽວກັບວຽກງານກຳລັງກອງຫຼອນ;

6. ຊີ້ນຳ, ຄຸ້ມຄອງ ແລະ ກວດກາ ຕາມສາຍຕັ້ງ ໃນການປະຕິບັດໜ້າທີ່ຂອງກຳລັງກອງຫຼອນ ໃນຂອບເຂດທົ່ວປະເທດ;

7. ສ້າງ, ບຳລຸງ, ອົບຮົມ-ຫັດແອບ, ຍົກລະດັບ ໃຫ້ກຳລັງກອງຫຼອນ ໃນຂອບເຂດທົ່ວປະເທດ;

8. ກຳນົດ ເງື່ອນໄຂ ແລະ ມາດຕະຖານ ຂອງກຳລັງກອງຫຼອນ;

9. ຕິດຕາມ, ກວດກາ ການຈັດຕັ້ງ, ການອະນຸມັດ ສ້າງຕັ້ງ, ຍຸບເລີກ, ແຕ່ງຕັ້ງ, ປົດຕຳແໜ່ງ, ສິ້ນສຸດ ແລະ ຖອນອາວຸດຍຸດໂທປະກອນ ຂອງກຳລັງກອງຫຼອນ ໃນຂອບເຂດທົ່ວປະເທດ;

10. ຮັບ ແລະ ພິຈາລະນາແກ້ໄຂ ຄຳຮ້ອງ, ຄຳສະເໜີ ກ່ຽວກັບວຽກງານກຳລັງກອງຫຼອນ;

11. ປະສານສົມທົບກັບ ກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງ, ແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານກຳລັງກອງຫຼອນ;

12. ພົວພັນ ຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ແລະ ສາກົນ ກ່ຽວກັບວຽກງານກຳລັງກອງຫຼອນ;

13. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກຳລັງກອງຫຼອນ ຕໍ່ລັດຖະບານ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 ສິດ ແລະ ໜ້າທີ່ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງ ວຽກງານກຳລັງກອງຫຼອນ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານກຳລັງກອງຫຼອນ ໃຫ້ເປັນ ແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ກົດໝາຍ ກ່ຽວກັບວຽກງານກຳລັງກອງຫຼອນ ຕາມຂອບເຂດຄວາມຮັບຜິດຊອບ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ເອກະສານ ທາງການທະຫານ ເພື່ອຄຸ້ມຄອງ ມະຫາພາກ ກ່ຽວກັບວຽກງານກຳກອງຫຼອນ;

4. ຈັດຕັ້ງປະຕິບັດວຽກງານ ຕາມຄຳສັ່ງຂອງສາຍຕັ້ງ ແລະ ຄະນະກຳມະການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂັ້ນຂອງຕົນ ຢ່າງເຂັ້ມງວດ;

5. ຊີ້ນຳ, ຄຸ້ມຄອງ ແລະ ກວດກາ ໃນການຈັດຕັ້ງປະຕິບັດວຽກງານ ຂອງກອງບັນຊາການທະຫານ ເມືອງ, ນະຄອນ;

6. ຈັດຕັ້ງປະຕິບັດແຜນການກໍ່ສ້າງ, ບຳລຸງ, ຍົກລະດັບ, ອົບຮົມ-ຫັດແອບ ແລະ ຄຸ້ມຄອງກຳລັງກອງຫຼອນ;

7. ສ້າງແຜນ ແລະ ຄຸ້ມຄອງນຳໃຊ້ງົບປະມານ, ອາວຸດຍຸດໂທປະກອນ;

8. ກຳນົດການຈັດຕັ້ງ, ມາດຕະຖານເງື່ອນໄຂ, ການບັນຈຸ ຂອງກຳລັງກອງຫຼອນ;

9. ສົມທົບກັບກົມການທະຫານທ້ອງຖິ່ນ ກົມໃຫຍ່ເສນາທິການກອງທັບ ຈັດຕັ້ງປະກາດສ້າງຕັ້ງ ຫຼື ຍຸບເລີກ ຫົວໜ່ວຍການຈັດຕັ້ງ ກຳລັງກອງຫຼອນ;

10. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າ ແລະ ຄະນະບັນຊາ ກອງຮ້ອຍ, ໝວດເອກະລາດ ກຳລັງກອງຫຼອນ ຕາມການສະເໜີຂອງ ກອງບັນຊາການທະຫານ ເມືອງ, ນະຄອນ;

11. ພິຈາລະນາແກ້ໄຂ ຄຳສະເໜີ, ຄຳຮ້ອງ ຂອງກຳລັງ ແລະ ພົນລະເມືອງ ກ່ຽວກັບວຽກງານກຳລັງກອງຫຼອນ;

12. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານກຳລັງກອງຫຼອນ;

13. ພົວພັນ ຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ແລະ ສາກົນ ກ່ຽວກັບວຽກງານກຳລັງກອງຫຼອນ ຕາມການເຫັນດີ ຂອງຂັ້ນເທິງ;

14. ສະຫຼຸບ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດ ວຽກງານກຳລັງກອງຫຼອນ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 51 ສິດ ແລະ ໜ້າທີ່ ກອງບັນຊາການທະຫານ ເມືອງ, ນະຄອນ**

ໃນການຄຸ້ມຄອງ ວຽກງານກຳລັງກອງຫຼອນ ກອງບັນຊາການທະຫານ ເມືອງ, ນະຄອນ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ມະຕິ, ຄຳສັ່ງ, ແຜນການ ຂອງຂັ້ນເທິງ ແລະ ຄະນະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂັ້ນຂອງຕົນ ຢ່າງເຂັ້ມງວດ;

2. ໂຄສະນາ, ສຶກສາອົບຮົມ ການເມືອງແນວຄິດ, ແນວທາງຂອງພັກ, ກົດໝາຍ ແລະ ລະບຽບການ ຂອງກຳລັງກອງຫຼອນ ຕາມຂອບເຂດຄວາມຮັບຜິດຊອບ;

3. ຊີ້ນຳ ແລະ ກວດກາ ການຈັດຕັ້ງປະຕິບັດວຽກງານກຳລັງກອງຫຼອນ ໃຫ້ບ້ານ, ຕາແສງ;

4. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ເອກະສານ ທາງການທະຫານ ເພື່ອຄຸ້ມຄອງມະຫາພາກ ກ່ຽວກັບວຽກງານກຳກອງຫຼອນ;

5. ຈັດຕັ້ງປະຕິບັດວຽກງານ ຕາມຄຳສັ່ງຂອງສາຍຕັ້ງ ແລະ ຄະນະກຳມະການ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂັ້ນຂອງຕົນ ຢ່າງເຂັ້ມງວດ;

6.ສະເໜີ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ບັນຊາກຳລັງກອງຫຼອນ ຂັ້ນກອງຮ້ອຍ, ໝວດເອກະລາດ;

7.ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ບັນຊາ ກຳລັງກອງຫຼອນ ຂັ້ນ ໝວດ, ໝູ່;

8.ອະນຸມັດເຂົ້າເປັນ ຫຼື ປົດອອກຈາກ ກຳລັງກອງຫຼອນ;

9.ສະເໜີຂຶ້ນແຜນການກໍ່ສ້າງ, ບຳລຸງ, ຍົກລະດັບ, ອົບຮົມ-ຫັດແອບ ແລະ ຄຸ້ມຄອງກຳລັງກອງຫຼອນ ຕໍ່ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ;

10. ສ້າງແຜນ ແລະ ຄຸ້ມຄອງນຳໃຊ້ງົບປະມານ, ອາວຸດຍຸດໂທປະກອນ;

11. ຮັບ ແລະ ສະເໜີ ຄຳຮ້ອງ, ຄຳສະເໜີ ຂອງກຳລັງ ແລະ ພົນລະເມືອງ ກ່ຽວກັບວຽກງານກຳລັງກອງຫຼອນ ຕໍ່ຂັ້ນເທິງຂອງຕົນ;

12. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານກຳລັງກອງຫຼອນ;

13. ສະຫຼຸບ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດ ວຽກງານກຳລັງກອງຫຼອນ ຕໍ່ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ແລະ ອົງການປົກຄອງ ເມືອງ, ນະຄອນ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 ສິດ ແລະ ໜ້າທີ່ ຄະນະກຳມະການປົກຄອງຕາແສງ**

ໃນການຄຸ້ມຄອງ ວຽກງານກຳລັງກອງຫຼອນ ຄະນະກຳມະການປົກຄອງຕາແສງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປົກປັກຮັກສາ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ ຕາມຂອບເຂດບ້ານ, ຕາແສງ;
2. ສຶກສາອົບຮົມປະຊາຊົນ ໃຫ້ເຊື່ອມຊຶມ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມຂອບເຂດບ້ານ, ຕາແສງ;
3. ລະດົມພົນລະເມືອງທີ່ມີເງື່ອນໄຂ ໃຫ້ຕື່ນຕົວເຂົ້າຮ່ວມວຽກງານກຳລັງກອງຫຼອນ;
4. ຂຶ້ນບັນຊີ ກຳລັງກອງຫຼອນ ສົ່ງໃຫ້ກອງບັນຊາການທະຫານ ເມືອງ, ນະຄອນ;
5. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຜູ້ບັນຊາ ກຳລັງກອງຫຼອນ ຂັ້ນ ໝວດ, ໝູ່;
6. ສະເໜີ ກອງບັນຊາການທະຫານ ເມືອງ, ນະຄອນ ອະນຸມັດເຂົ້າເປັນ ຫຼື ປົດອອກຈາກ ກຳລັງກອງຫຼອນ;
7. ຊີ້ນຳ ກຳລັງກອງຫຼອນ ກ່ຽວກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
8. ສະຫຼຸບ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານກຳລັງກອງຫຼອນ ໃຫ້ກອງບັນຊາການທະຫານ ເມືອງ, ນະຄອນ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 ສິດ ແລະ ໜ້າທີ່ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ໃຫ້ການຮ່ວມມືກັບ ຂະແໜງການປ້ອງກັນຊາດ ກ່ຽວກັບວຽກງານກຳລັງກອງຫຼອນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການຄຸ້ມຄອງ ວຽກງານກຳລັງປ້ອງກັນຕົວ

**ມາດຕາ 54 ອົງການ ຄຸ້ມຄອງ ວຽກງານກຳລັງປ້ອງກັນຕົວ**

ອົງການ ຄຸ້ມຄອງກຳລັງປ້ອງກັນຕົວ ມີ ດັ່ງນີ້:

1. ກະຊວງປ້ອງກັນປະເທດ;
2. ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ;
3. ກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ.

**ມາດຕາ 55 ສິດ ແລະ ໜ້າທີ່ ກະຊວງປ້ອງກັນປະເທດ**

ໃນການຄຸ້ມຄອງ ວຽກງານກຳລັງປ້ອງກັນຕົວ ກະຊວງປ້ອງກັນປະເທດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານກຳລັງປ້ອງກັນຕົວ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານກຳລັງປ້ອງກັນຕົວ ໃຫ້ເປັນ ແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານ ກຳລັງປ້ອງກັນຕົວ ໃນຂອບເຂດທົ່ວປະເທດ;

4. ອະນຸມັດ ສ້າງຕັ້ງ ຫຼື ຍຸບເລີກ ການຈັດຕັ້ງກຳລັງປ້ອງກັນຕົວ ຂັ້ນ ກອງພັນ, ກອງຮ້ອຍ, ໝວດ ເອກະລາດ;

5.ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ເອກະສານ ທາງການທະຫານ ເພື່ອຄຸ້ມຄອງ ມະຫາພາກ ກ່ຽວກັບວຽກງານກຳລັງປ້ອງກັນຕົວ;

6. ຊີ້ນຳ, ຄຸ້ມຄອງ ແລະ ກວດກາ ຕາມສາຍຕັ້ງ ໃນການປະຕິບັດໜ້າທີ່ຂອງກຳລັງປ້ອງກັນຕົວ ໃນຂອບເຂດທົ່ວປະເທດ;

7. ກຳນົດ ແຜນອົບຮົມ-ຫັດແອບ ໃຫ້ກຳລັງປ້ອງກັນຕົວ ໃນຂອບເຂດທົ່ວປະເທດ;

8. ກຳນົດການຈັດຕັ້ງ ແລະ ການບັນຈຸ ຂອງກຳລັງປ້ອງກັນຕົວ;

9. ຕິດຕາມ, ກວດກາ ການຈັດຕັ້ງ, ສ້າງຕັ້ງ, ຍຸບເລີກ, ແຕ່ງຕັ້ງ, ປົດຕຳແໜ່ງ, ສິ້ນສຸດ ແລະ ຖອນ ອາວຸດຍຸດໂທປະກອນ ຂອງກຳລັງປ້ອງກັນຕົວ ໃນຂອບເຂດທົ່ວປະເທດ;

10. ພິຈາລະນາແກ້ໄຂ ຄຳສະເໜີ, ຄຳຮ້ອງ ຂອງກຳລັງ ແລະ ພົນລະເມືອງ ກ່ຽວກັບວຽກງານກຳລັງ ປ້ອງກັນຕົວ;

11. ປະສານສົມທົບກັບ ກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານອົງການ, ໂຮງຈັກ, ໂຮງງານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານກຳລັງປ້ອງກັນຕົວ;

12. ພົວພັນ ຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ແລະ ສາກົນ ກ່ຽວກັບວຽກງານກຳລັງປ້ອງ ກັນຕົວ ຕາມການເຫັນດີ ຂອງລັດຖະບານ;

13. ສະຫຼຸບ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດ ວຽກງານກຳລັງປ້ອງກັນຕົວ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 56 ສິດ ແລະ ໜ້າທີ່ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ**

ໃນການຄຸ້ມຄອງ ວຽກງານກຳລັງປ້ອງກັນຕົວ ກອງບັນຊາການທະຫານ ນະຄອນຫຼວງ, ແຂວງ ມີ ສິດ ແລະ ໜ້າທີ່ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານກຳລັງປ້ອງກັນຕົວ ໃຫ້ເປັນ ແຜນການ, ແຜນງານ, ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານ ກຳລັງປ້ອງກັນຕົວ;

3.ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ເອກະສານ ທາງການທະຫານ ກ່ຽວກັບວຽກ ງານກຳລັງປ້ອງກັນຕົວ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

4. ຊີ້ນຳ, ຄຸ້ມຄອງ ແລະ ກວດກາ ໃນການປະຕິບັດໜ້າທີ່ຂອງກຳລັງປ້ອງກັນຕົວ;

5. ກຳນົດ ແຜນອົບຮົມ-ຫັດແອບ ໃຫ້ກຳລັງປ້ອງກັນຕົວ;

6. ກຳນົດການຈັດຕັ້ງ ແລະ ການບັນຈຸ ຂອງກຳລັງປ້ອງກັນຕົວ;

7. ຕິດຕາມ, ກວດກາ ການຈັດຕັ້ງ, ສ້າງຕັ້ງ, ຍຸບເລີກ, ແຕ່ງຕັ້ງ, ປົດຕຳແໜ່ງ, ສິ້ນສຸດ ຂອງກຳລັງປ້ອງກັນຕົວ;

8. ພິຈາລະນາແກ້ໄຂ ຄຳສະເໜີ, ຄຳຮ້ອງ ຂອງກຳລັງ ແລະ ພົນລະເມືອງ ກ່ຽວກັບວຽກງານກຳລັງປ້ອງກັນຕົວ;

9. ປະສານສົມທົບກັບ ພະແນກ, ອົງການທຽບເທົ່າພະແນກ ຂັ້ນແຂວງ, ສຳນັກງານອົງການ, ໂຮງຈັກ,ໂຮງງານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານກຳລັງປ້ອງກັນຕົວ;

10. ພົວພັນ ຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ແລະ ສາກົນ ກ່ຽວກັບວຽກງານກຳລັງປ້ອງກັນຕົວ ຕາມການເຫັນດີ ຂອງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດ ວຽກງານກຳລັງປ້ອງກັນຕົວ ຕໍ່ຂັ້ນເທິງຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 57 ສິດ ແລະ ໜ້າທີ່ ກະຊວງ, ອົງການລັດທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ.**

ໃນການຄຸ້ມຄອງວຽກງານກຳລັງປ້ອງກັນຕົວ ກະຊວງ, ອົງການທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກຳລັງປ້ອງກັນຕົວ;

2. ສະເໜີ ສ້າງຕັ້ງ ຫຼື ຍຸບເລີກ ການຈັດຕັ້ງກຳລັງປ້ອງກັນຕົວ ຂັ້ນ ກອງພັນ, ກອງຮ້ອຍ, ໝວດເອກະລາດ;

3. ສະເໜີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຂັ້ນ ກອງພັນ, ກອງຮ້ອຍ ແລະ ໝວດເອກະລາດ ກຳລັງປ້ອງກັນຕົວ;

4. ອະນຸມັດເຂົ້າເປັນ ຫຼື ປົດອອກຈາກ ກຳລັງປ້ອງກັນຕົວ;

5. ສະເໜີ ຂື້ນແຜນການກໍ່ສ້າງ, ບຳລຸງ, ຍົກລະດັບ, ອົບຮົມ-ຫັດແອບ ແລະ ຄຸ້ມຄອງກຳລັງປ້ອງກັນຕົວ;

6. ນຳພາ, ຊີ້ນຳ ຄຸ້ມຄອງການຈັດຕັ້ງ ກຳລັງປ້ອງກັນຕົວ;

7. ນຳໃຊ້ງົບປະມານ ເຂົ້າໃນວຽກງານກຳລັງປ້ອງກັນຕົວ;

8. ປະສານສົມທົບກັບ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານກຳລັງປ້ອງກັນຕົວ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານກຳລັງປ້ອງກັນຕົວ ຕໍ່ກະຊວງປ້ອງກັນປະເທດ ເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 3
## ອົງການກວດກາ ວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ

**ມາດຕາ 58 ອົງການກວດກາ**

ອົງການກວດກາວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ແມ່ນ ອົງການດຽວກັບ ອົງການຄຸ້ມຄອງ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 48 ແລະ ມາດຕາ 54 ຂອງດຳລັດສະບັບນີ້.

**ມາດຕາ 59 ເນື້ອໃນການກວດກາ**

ການກວດກາວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ມີ ເນື້ອໃນ ດັ່ງນີ້:

1. ການປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ;
2. ການປະຕິບັດໜ້າທີ່ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ;
3. ການປະຕິບັດນະໂຍບາຍ ຕໍ່ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ;
4. ເນື້ອໃນອື່ນທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 60 ຮູບການກວດກາ**

ການກວດກາວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ມີ ສາມ ຮູບການ ດັ່ງນີ້:

1. ກວດກາປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;
2. ກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ໂດຍມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;
3. ກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ແລະ ບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ.

## ພາກທີ VI
## ງົບປະມານ, ການຄຸ້ມຄອງ ແລະ ການນຳໃຊ້ງົບປະມານ

**ມາດຕາ 61 ແຫຼ່ງທີ່ມາ ງົບປະມານ**

ງົບປະມານທີ່ຮັບໃຊ້ໃນວຽກງານ ກຳລັງກອງຫຼອນ ແມ່ນ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ເງິນພັນທະປ້ອງກັນຊາດ 60.000 ກີບ/ປີ/ຄອບຄົວ;
3. ການປະກອບສ່ວນຂອງ ພາກສ່ວນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ງົບປະມານທີ່ຮັບໃຊ້ວຽກງານ ກຳລັງປ້ອງກັນຕົວ ແມ່ນ ກະຊວງ, ອົງການລັດທຽບເທົ່າກະຊວງ, ສຳນັກງານອົງການ, ລັດວິສາຫະກິດ, ໂຮງຈັກ, ໂຮງງານ ທີ່ເປັນຂອງລັດ ເປັນຜູ້ຮັບຜິດຊອບ.

**ມາດຕາ 62 ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ**

ການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ເຂົ້າໃນວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ການນຳໃຊ້ງົບປະມານ ແມ່ນ ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ.

## ພາກທີ VII
## ເຄື່ອງແບບ, ກາໝາຍ ແລະ ວັນສ້າງຕັ້ງ

**ມາດຕາ 63 ເຄື່ອງແບບ ແລະ ກາໝາຍ**

1. ເຄື່ອງແບບ ແລະ ກາໝາຍ ກຳລັງກອງຫຼອນ ມີ ດັ່ງນີ້:

1.1. ເຄື່ອງແບບກຳລັງກອງຫຼອນ ມີ ຊຸດນ້ອຍແຂນຍາວ, ແອວຕັ້ງ, ໄດ້ກຳນົດສີແພເບີ 92, ໝວກແງ໊ບຕິດກາໝາຍກອງຫຼອນໃສ່ເທິງແງ໊ບໝວກ, ເກີບແພຄໍສູງ;

1.2. ກາໝາຍ ກອງຫຼອນ (ກຫຼ) ຕິດຢູ່ກົກແຂນເສື້ອເບື້ອງຊ້າຍ, ມີຂະໜາດກວ້າງ 5,5 ຊມ, ລວງຍາວ 6,5 ຊມ.

2. ເຄື່ອງແບບ ແລະ ກາໝາຍ ກຳລັງປ້ອງກັນຕົວ ມີ ດັ່ງນີ້:

2.1. ເຄື່ອງແບບກອງປ້ອງກັນຕົວ ມີ ຊຸດນ້ອຍແຂນຍາວ, ແອວຕັ້ງ, ໄດ້ກຳນົດສີແພເບີ R 7676, ມີໝວກແງ໊ບຕິດກາໝາຍ (ປກຕ) ໃສ່ເທິງແງ໊ບໝວກ, ມີເກີບແພຄໍສູງ;

2.2. ກາໝາຍ ຕິດຢູ່ກົກແຂນເສື້ອເບື້ອງຊ້າຍ, ມີຂະໜາດກວ້າງ 5,5 ຊມ, ລວງຍາວ 6,5 ຊມ.

**ມາດຕາ 64 ວັນສ້າງຕັ້ງ**

ວັນສ້າງຕັ້ງ ກຳລັງກອງຫຼອນ ແມ່ນ ວັນທີ 1947.

ວັນສ້າງຕັ້ງ ກຳລັງປ້ອງກັນຕົວ ແມ່ນ ວັນທີ 15 ສິງຫາ 1975.

ທຸກໆປີ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ຖືເອົາວັນດັ່ງກ່າວເພື່ອຈັດກິດຈະກຳ, ສະເຫຼີມສະຫຼອງ ແລະ ລະນຶກເຖິງວັນດັ່ງກ່າວ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 65 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການເປັນແບບຢ່າງທີ່ດີ, ການປະກອບສ່ວນຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດວຽກງານ ກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ຢ່າງຖືກຕ້ອງ, ມີປະສິດທິພາບ ແລະ ປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

ສຳລັບກຳລັງກອງຫຼອນ ແລະ ກຳລັງປ້ອງກັນຕົວ ທີ່ມີຜົນງານດີເດັ່ນ ຈະໄດ້ຮັບການຍ້ອງຍໍ ແລະ ປະຕິບັດນະໂຍບາຍ ຕາມຄວາມເໝາະສົມ.

**ມາດຕາ 66 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 67 ການຈັດຕັ້ງປະຕິບັດ**

ກະຊວງປ້ອງກັນປະເທດ ເປັນເຈົ້າການໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 68 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ                    ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**